ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# "ຄະນະກຳມະການ" ໃນໂຄງປະກອບການຈັດຕັ້ງ ທຫລ

ສະບາຍດີ ທ່ານຜູ້ອ່ານທີ່ຮັກແພງ !!! ໃນຄັ້ງກ່ອນ ຜູ້ຂຽນໄດ້ນຳສະເໜີບົດໂຄສະນາເຜີຍແຜ່ກົດໝາຍໃນຫົວຂໍ້ ໂຄງປະກອບການຈັດຕັ້ງຂອງ ທຫລ ໃນໂຄງປະກອບ "ສະພາບໍລິຫານ" ໄປແລ້ວວ່າ ແມ່ນອົງການຈັດຕັ້ງສູງສຸດຂອງ ທະນາຄານແຫ່ງ ສປປ ລາວ (ທຫລ) ປະຕິບັດສິດ ແລະ ໜ້າທີ່ຕົ້ນຕໍໃນການພິຈາລະນາຮັບຮອງ ແຜນເງິນຕາແຫ່ງຊາດ ແລະ ການເຄື່ອນໄຫວທັງໝົດຂອງ ທຫລ ຊຶ່ງໃນຄັ້ງນີ້ເຮົາຈະມາສືບຕໍ່ນຳສະເໜີໂຄງປະກອບຂອງຄະນະກຳມະການວ່າປະກອບມີຄືແນວໃດ ໂດຍສະເພາະແມ່ນສິດ ແລະ ໜ້າທີ່ຂອງຄະນະກຳມະການດັ່ງກ່າວ. ອີງຕາມກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ /47ສພຊ, ລົງວັນທີ 19 ມິຖຸນາ 2018 ມາດຕາ 18 ຄະນະກຳມະການ ປະກອບມີ: 1. ຄະນະກຳມະການນະໂຍບາຍເງິນຕາ 2. ຄະນະກຳມະການກວດກາ 3. ຄະນະກຳມະການອື່ນຕາມຄວາມຈຳເປັນຂອງວຽກງານ ຊຶ່ງຄະນະດັ່ງກ່າວ ແມ່ນໂຄງປະກອບກົງຈັກຂອງທະນາຄານແຫ່ງ ສປປ ລາວ ໂດຍມີສິດ ແລະ ໜ້າທີ່ສະເພາະດ້ານທີ່ແຕກຕ່າງກັນ ຊຶ່ງແຕ່ລະຄະນະກຳມະການມີລາຍລະອຽດ ດັ່ງນີ້:

ຄະນະກຳມະການນະໂຍບາຍເງິນຕາ: ປະກອບດ້ວຍສະມາຊິກ ຢ່າງໜ້ອຍ ເຈັດ ຄົນ ໂດຍມີ ຜູ້ວ່າການ ທຫລ ເປັນປະທານ, ຮອງຜູ້ວ່າການ ທຫລ ເປັນຮອງປະທານ, ຮອງລັດຖະມົນຕີກະຊວງການເງິນ ເປັນຮອງປະທານ ແລະ ຄະນະກຳມະການຈຳນວນໜຶ່ງ ທີ່ມາຈາກ ທຫລ, ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ຄະນະກຳມະການນະໂຍບາຍເງິນຕາ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີຕາມການສະເໜີຂອງຜູ້ວ່າການ ທຫລ ປະຕິບັດ ສິດ ແລະ ໜ້າທີ່ຕົ້ນຕໍ ໃນການຄົ້ນຄວ້າແຜນເງິນຕາແຫ່ງຊາດ, ຄົ້ນຄວ້ານະໂຍບາຍເງິນຕາ, ຕິດຕາມ ກວດກາ ແລະ ປະເມີນ ການຈັດຕັ້ງປະຕິບັດນະໂຍບາຍເງິນຕາຂອງ ທຫລ, ຄົ້ນຄວ້າມີຄຳເຫັນຕໍ່ການສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍເງິນຕາ, ເຂົ້າຮ່ວມ ແລະ ລາຍງານຜົນການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ຕໍ່ກອງປະຊຸມສະພາບໍລິຫານ. ຄະນະກຳມະການນະໂຍບາຍເງິນຕາມີອາຍຸການ ຫ້າ ປີ ເຄື່ອນໄຫວວຽກງານຕາມລະບອບປະຊຸມ ຊຶ່ງຈັດຂຶ້ນ ສອງເດືອນຕໍ່ຄັ້ງ ແລະ ໃນກໍລະນີຈຳເປັນຮີບດ່ວນແມ່ນສາມາດຈັດກອງປະຊຸມໄດ້ທຸກເວລາ.

ຄະນະກຳມະການກວດກາ: ປະກອບດ້ວຍສະມາຊິກຢ່າງໜ້ອຍ ຫ້າ ຄົນ ໂດຍມີ ສະມາຊິກສະພາບໍລິຫານຈາກພາກສ່ວນອື່ນເປັນປະທານ, ຮອງຜູ້ວ່າການ ທຫລ ທີ່ຮັບຜິດຊອບວຽກງານກວດກາ ເປັນຮອງປະທານ ແລະ ກຳມະການຈຳນວນໜຶ່ງ ທີ່ມາຈາກທະນາຄານແຫ່ງ ສປປ ລາວ ແລະ/ຫຼື ພາກສ່ວນທີ່ກ່ຽວຂ້ອງ.

ຄະນະກຳມະການກວດກາ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍສະພາບໍລິຫານ ຕາມການສະເໜີຂອງຜູ້ວ່າການ ທຫລ ປະຕິບັດສິດ ແລະ ໜ້າທີ່ຕົ້ນຕໍໃນການກວດກາ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ, ຄວາມຖືກຕ້ອງຂອງເອກະສານລາຍງານການເງິນທັງປະສິດທິຜົນຂອງການດຳເນີນງານ ແລະ ການຈັດຕັ້ງປະຕິບັດວຽກງານກວດກາພາຍໃນ ຂອງທະນາຄານແຫ່ງ ສປປ ລາວ ພ້ອມ, ເຂົ້າຮ່ວມ ແລະ ລາຍງານຜົນການກວດກາ ຕໍ່ກອງປະຊຸມສະພາບໍລິຫານ. ຄະນະກຳມະການກວດກາ ເຄື່ອນໄຫວວຽກງານຕາມລະບອບປະຊຸມ ຊຶ່ງຈັດຂຶ້ນ ສາມ ເດືອນ ຕໍ່ຄັ້ງ ໃນກໍລະນີຈຳເປັນຮີບດ່ວນ ສາມາດຈັດກອງປະຊຸມໄດ້ທຸກເວລາ ແລະ ມີອາຍຸການ ຫ້າ ປີ ເຊັ່ນດຽວກັບຄະນະກຳມະການນະໂຍບາຍເງິນຕາ.

ຄະນະກຳມະການອື່ນຕາມຄວາມຈຳເປັນຂອງວຽກງານ: ຊຶ່ງຄະນະກຳມະການນີ້ ແມ່ນບໍ່ໄດ້ກຳນົດເນື້ອໃນໃນກົດໝາຍ ແຕ່ເພື່ອເປັນການຮອງຮັບການຂະຫຍາຍຕົວຂອງວຽກງານໃນຕໍ່ໜ້າ ທີ່ອາດຈຳເປັນຕ້ອງໄດ້ລົງເລິກວຽກງານໃດໜຶ່ງເພີ່ມເຕີມ ແລະ ຈຳເປັນຕ້ອງມີກົງຈັກອື່ນທີ່ມາຮັບຜິດຊອບວຽກງານດັ່ງກ່າວເປັນອັນສະເພາະ, ດ້ວຍເຫດນີ້ຈຶ່ງໄດ້ກຳນົດ "ຄະນະກຳມະການ" ດັ່ງກ່າວນີ້ເປີດໄວ້.

ຮຽນທ່ານຜູ້ອ່ານ ເຫດຜົນທີ່ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ໄດ້ກຳນົດໃຫ້ມີຄະນະກຳມະການໃນໂຄງປະກອບການຈັດຕັ້ງ ກໍເພື່ອໃຫ້ຄະນະກຳມະການດັ່ງກ່າວ ເຂົ້າມາລົງເລິກຄົ້ນຄວ້ານະໂຍບາຍສະເພາະດ້ານ ແລະ ມາເປັນຕົວຊ່ວຍໃນການ ກັ່ນກອງ, ພິຈາລະຮັບຮອງ ແລະ ຕັດສິນບັນຫາຕ່າງໆຂອງສະພາບໍລິຫານ, ສະນັ້ນແລ້ວ ມັນມີຄວາມຈຳເປັນຕ້ອງມີຄະນະກຳມະການດັ່ງກ່າວ ໂດຍສະເພາະການຄົ້ນຄວ້າວຽກງານນະໂຍບາຍເງິນຕາ.

ທັງໝົດທີ່ໄດ້ນຳສະເໜີໄປນັ້ນກໍແມ່ນໂຄງປະກອບກົງຈັກໜຶ່ງ ຂອງໂຄງປະກອບການຈັດຕັ້ງທະນາຄານແຫ່ງ ສປປ ລາວ ທີ່ປະກອບມີຄະນະຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອເຂົ້າມາປະຕິບັດວຽກງານກໍຄືປະຕິບັດສິດ ແລະ ໜ້າທີ່ຕາມພາລະບົດບາດຂອງຕົນທີ່ກຳນົດໄວ້ໃນແຕ່ລະຄະນະ. ຫວັງຢ່າງຍິ່ງວ່າເນື້ອໃນທີ່ຜູ້ຂຽນນຳສະເໜີໄປຄົງຈະເປັນປະໂຫຍດແກ່ບັນດາທ່ານ ໃນການສ້າງຄວາມຮູ້ ແລະ ເຂົ້າໃຈຕໍ່ກັບທະນາຄານແຫ່ງ ສປປ ລາວໃຫ້ຫຼາຍຂຶ້ນ.

**# ບົດຄວາມໂດຍ: ນ. ຄຳເບົ້າ ສຸວໍລະວົງ, ກົມນິຕິກຳ ທະນາຄານແຫ່ງ ສປປ ລາວ.**

ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ